# Course: Agriculture Economics

## Week 14

## Agricultural Commodity Market in Advance (continue)



**Phavone Keodouangkham**

**Souphanouvong University**

# ວິຊາ: ເສດຖະສາດກະສິກຳ

## Week 14

## ຕະຫຼາດສິນຄ້າກະເສດລ່ວງໜ້າ (ຕໍ່)



# Review

- ຄວາມໝາຍ ແລະ ລັກສະນະຂອງຕະຫຼາດຂາຍສິນຄ້າລ່ວງໜ້າ (Futures Market)
- ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ
- ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ
- ເງື່ອນໄຂ ແລະ ລັກສະນະສິນຄ້າກະເສດທີ່ເໝາະສົມໃນການເຮັດສັນຍາຊື້ຂາຍໃນຕະຫຼາດລ່ວງໜ້າ

# Outline

1. ປະໂຫຍດຂອງຕະຫຼາດສິນຄ້າກະເສດລ່ວງໜ້າ
2. **ອະທິບາຍການກຳນົດລາຄາ**



# 01

# ປະໂຫຍດຂອງຕະຫຼາດ ສິນຄ້າກະເສດລ່ວງໜ້າ



# ປະໂຫຍດຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

- ເປັນປະໂຫຍດຕໍ່ກະສິກອນ ຫຼື ສະຖາບັນກະສິກອນ
- ເປັນປະໂຫຍດຕໍ່ໂຮງງານແປຮູບສິນຄ້າກະເສດ
- ເປັນປະໂຫຍດຕໍ່ນັກເກັງກຳໄລ
- ເປັນປະໂຫຍດຕໍ່ການຊ່ວຍກຳນົດລາຄາ
- ຊ່ວຍເພີ່ມປະສິດທິພາບທາງການຕະຫຼາດ
- ເປັນແຫຼ່ງເກັບລວບລວມ ແລະ ໃຫ້ບໍລິການຫຼືກະຈາຍຂ່າວສານຂໍ້ມູນດ້ານການຕະຫຼາດ
- ເປັນປະໂຫຍດແກ່ຊາວກະສິກອນ ແລະ ຜູ້ບໍລິໂພກ
- ການທີ່ຊາວກະສິກອນສາມາດຂາຍສິນຄ້າໄດ້ໃນລາຄາສູງອາດຊ່ວຍຫຼຸດແຮງກົດດັນທີ່ຈະໃຫ້ລັດຖະບານເຂົ້າມາແຊກແຊງລາຄາ





# ເປັນປະໂຫຍດຕໍ່ກະສິກອນ ຫຼື ສະຖາບັນກະສິກອນ

ພໍ່ຄ້າທີ່ມີສິນຄ້າທີ່ມີສິນຄ້າຂາຍໃນຕະຫຼາດປັດຈຸບັນໃນອານາຄົດ ເຊິ່ງມີຄວາມສ່ຽງໃນກໍລະນີນີ້ດຳເນີນການດ້ວຍເປີດໃບສັນຍາຂາຍໃນຕະຫຼາດລ່ວງໜ້າຈະເຮັດໃຫ້ສາມາດຫຼຸດຄວາມສ່ຽງລົງໄດ້.



# ປະໂຫຍດຕໍ່ໂຮງງານແປຮູບສິນຄ້າກະເສດ



ພໍ່ຄ້າທີ່ຕ້ອງການຈະຊື້ສິນຄ້າແທ້ໆ ໃນອານາຄົດໃນປັດຈຸບັນ ເຊິ່ງມີຄວາມສ່ຽງຈາກລາຄາສິນຄ້ານັ້ນອາດຈະສູງຂຶ້ນ ເຮັດໃຫ້ອາດຈະຕ້ອງຊື້ສິນຄ້າໃນລາຄາທີ່ສູງກວ່າຕັ້ງໃຈຈະຊື້ ເຊັ່ນ ພໍ່ຄ້າສົ່ງອອກເຂົ້າລາຍໜຶ່ງເຮັດສັນຍາຂາຍເຂົ້າຂາວ 5% ໂດຍກຳນົດລາຄາ ແລະ ລາຄາສົ່ງມອບອີກສອງເດືອນຂ້າງໜ້າ ເຊິ່ງຖ້າຊື້ເຂົ້າໄວ້ໃນລາຄານີ້ກໍ່ຈະຕ້ອງເສຍຄ່າຈັດເກັບຈົນເຖິງມື້ສົ່ງມອບ ແຕ່ຖ້າບໍ່ຊື້ຖ້າໄວ້ຊື້ເມື່ອໃກ້ເວລາສົ່ງມອບກໍ່ມີຄວາມສ່ຽງທີ່ລາຄາອາດຈະສູງຂຶ້ນຫຼາຍກໍ່ໄດ້ ເປັນຕົ້ນ ການປະກັນຄວາມສ່ຽງໃນກໍລະນີນີ້ດຳເນີນການໂດຍເຮັດໃບສັນຍາຊື້ຂາຍໃນຕະຫຼາດລ່ວງໜ້າຈະເຮັດໃຫ້ສາມາດຫຼຸດຄວາມສ່ຽງລົງໄດ້.

ໂດຍນັກເກັງກຳໄລຄາດວ່າລາຄາສິນຄ້າຊະນິດໃດຊະນິດໜຶ່ງຈະສູງຂຶ້ນ ຫຼື ອີກຢ່າງໜຶ່ງພວກເຂົາຄິດວ່າລາຄາສິນຄ້າຊະນິດນັ້ນຂະນະນີ້ຕ່ຳ ກໍ່ຈະເປີດໃບສັນຍາຊື້ຂາຍລ່ວງໜ້າ ແຕ່ຖ້າຄິດວ່າຂະນະນີ້ລາຄາສິນຄ້າຊະນິດນີ້ຄ່ອນຂ້າງສູງ ແລະ ຄາດວ່າຈະຫຼຸດລົງໃນອານາຄົດກໍ່ຈະເປີດໃບສັນຍາຂາຍລ່ວງໜ້າເຊິ່ງຖ້າພວກເຂົາຄາດການຖືກກໍ່ຈະເຮັດໃຫ້ໄດ້ກຳໄລ.

## ປະໂຫຍດຕໍ່ນັກເກັງກຳໄລ

# ປະໂຫຍດຕໍ່ການຊ່ວຍກຳນົດລາຄາ

ທັງນີ້ເພາະລາຄາຂອງສິນຄ້າຕ່າງໆທີ່ໄດ້ຈາກການສະເໜີຊື້ ແລະ ສະ ເໜີຂາຍໃນຕະຫຼາດຊື້ຂາຍລ່ວງໜ້າຈະສະທ້ອນຄວາມຕ້ອງການຊື້ ແລະ ຕ້ອງການຂາຍຂອງຜູ້ຊື້ຜູ້ຂາຍກຸ່ມໃຫຍ່ ແລະ ສະທ້ອນສະຖານະການອຸປະສົງ ແລະ ອຸປະທານໃນປັດຈຸບັນ ກັບຄວາມສຳພັນຂອງລາຄາໃນອານາຄົດ.



# ຊ່ວຍເພີ່ມປະສິດທິພາບທາງການຕະຫຼາດ

ຊ່ວຍເພີ່ມປະສິດທິພາບທາງການຕະຫຼາດ ເພາະຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າເປັນແຫຼ່ງກາງທີ່ຜູ້ຊື້ຜູ້ຂາຍມາພົບປະຊື້ຂາຍສິນຄ້າກັນ ເຊິ່ງເມື່ອຜູ້ຊື້ຜູ້ຂາຍຮູ້ແຫຼ່ງທີ່ມາພົບປະກັນ ຈະຊ່ວຍຫຼຸດຄ່າໃຊ້ຈ່າຍໃນການຄົ້ນຫາຂໍ້ມູນແຫຼ່ງຊື້ຂາຍ ນອກຈາກນີ້ຍັງອາດຊ່ວຍຫຼຸດອຳນາດຜູກຂາດຂອງພໍ່ຄ້າດ້ວຍ ເພາະເມື່ອພໍ່ຄ້າຈຳນວນຫຼາຍຮູ້ຂໍ້ມູນແຫຼ່ງຊື້ແຫຼ່ງຂາຍ ແລະ ລາຄາ ພໍ່ຄ້າທີ່ຕ້ອງການຊື້ຍ່ອມສະແຫວງຫາຊື້ຈາກແຫຼ່ງທີ່ລາຄາຖືກ ຂະນະທີ່ຜູ້ຂາຍຍ່ອມຕ້ອງການຂາຍທີ່ລາຄາແພງ ຈະເຮັດໃຫ້ເກີດການແຂ່ງຂັນໃນການຊື້ຂາຍຫຼາຍຂຶ້ນ.

# ເປັນແຫຼ່ງເກັບລວບລວມ ແລະ ໃຫ້ບໍລິການ

ເປັນແຫຼ່ງເກັບລວບລວມ ແລະ ໃຫ້ບໍລິການ ຫຼື ກະຈາຍຂ່າວສານຂໍ້ມູນດ້ານການຕະຫຼາດ ແລະ ລາຄາທັງຕະຫຼາດຊື້ຂາຍລ່ວງໜ້າສິນຄ້າກະເສດປັດຈຸບັນ ແລະ ຕະຫຼາດປັດຈຸບັນ ເຊິ່ງເປັນປະໂຫຍດຕໍ່ຊາວກະສິກອນ ພໍ່ຄ້າລະດັບຕ່າງໆ ນັກເກງກໍາໄລ ໂຮງງານແປຮູບ ຜູ້ບໍລິໂພກ ແລະ ລັດຖະບານໃນການດໍາເນີນນະໂຍບາຍ ແລະ ມາດຕະການດ້ານການຕະຫຼາດ ແລະ ລາຄາ



# ເປັນປະໂຫຍດແກ່ຊາວກະສິກອນ ແລະ ຜູ້ບໍລິໂພກ

ເປັນປະໂຫຍດແກ່ຊາວກະສິກອນ ແລະ ຜູ້ບໍລິໂພກ ເພາະການເພີ່ມປະສິດທິພາບການຕະຫຼາດ ແລະ ຫຼຸດອຳນາດຜູກຂາດຂອງພໍ່ຄ້າຄົນກາງ ຈະຊ່ວຍຫຼຸດກຳໄລສ່ວນເກີນທີ່ພໍ່ຄ້າໄດ້ຮັບລົງ ຈະຊ່ວຍຍຫຼຸດຄ່າໃຊ້ຈ່າຍໃນການຕະຫຼາດ ແລະ ສ່ວນເຫຼືອມການຕະຫຼາດ ເຊິ່ງອາດຈະເຮັດໃຫ້ຊາວກະສິກອນຂາຍສິນຄ້າໄດ້ໃນລາຄາທີ່ສູງຂຶ້ນ ແລະ ຜູ້ບໍລິໂພກຊື້ສິນຄ້າໄດ້ໃນລາຄາທີ່ຖືກລົງ

# ຫຼຸດແຮງກົດດັນທີ່ຈະໃຫ້ລັດຖະບານເຂົ້າມາແຊກແຊງຕະຫຼາດ ແລະ ປະກັນລາຄາ

ການທີ່ຊາວກະສິກອນສາມາດຂາຍສິນຄ້າໄດ້ໃນລາຄາສູງອາດຊ່ວຍຫຼຸດແຮງກົດດັນທີ່ຈະໃຫ້ລັດຖະບານເຂົ້າມາແຊກແຊງຕະຫຼາດ ແລະ ປະກັນລາຄາ ຈະຊ່ວຍໃຫ້ບໍ່ເກີດການບິດເບືອນໃນການຕະຫຼາດ ແລະ ລາຄາ ແລະ ຊ່ວຍປະຫຍັດງົບປະມານຂອງລັດຖະບານ ຕະຫຼອດຈົນເຖິງຫຼຸດບັນຫາຄໍລັບຊັນດ້ວຍ.




02
ອະທິບາຍການກຳນົດລາຄາ

ໃນຕະຫຼາດສິນຄ້າກະເສດ ຊາວກະສິກອນສ່ວນໃຫຍ່ຈະເປັນລາຍຍ່ອຍໆ ຢູ່ກະຈັດກະຈາຍທົ່ວໄປຊາວກະສິກອນແຕ່ລະລາຍຈະບໍ່ມີອຳນາດຕໍ່ລອງລາຄາ ຕ້ອງຂາຍຕາມລາຄາຕະຫຼາດ

# ການກຳນົດລາຄາທາງທິດສະດີໃນຕະຫຼາດ

**ຂາຍ (selling)**

ລັກສະນະຕະຫຼາດຂາຍສິນຄ້າກະເສດມີທັງເປັນ ຫຼື ໃກ້ຄຽງ ກັບການແຂ່ງຂັນທີ່ສົມບູນ ແລະ ຕະຫຼາດການແຂ່ງຂັນທີ່ບໍ່ສົມບູນສະນັ້ນການອະທິບາຍການກຳນົດລາຄາໃນເຊີງທິດສະດີໃນທີ່ນີ້ຈຶ່ງແຍກອະທິບາຍການກຳນົດລາຄາໃນຕະຫຼາດທັງສອງລັກສະນະ.

# ການກຳນົດລາຄາໃນຕະຫຼາດຂາຍແຂ່ງຂັນທີ່ສົມບູນ

# ການກຳນົດລາຄາຕະຫຼາດ ແລະ ລາຄາຂາຍຜູ້ປະກອບການຫຼືຊາວກະສິກອນແຕ່ລະລາຍ




**(ກ)ຕະຫຼາດ**




**(ຂ)ຜູ້ຂາຍແຕ່ລະລາຍ**

# ການກຳນົດລາຄາໃນຕະຫຼາດການຂາຍທີ່ແຂ່ງຂັນບໍ່ສົມບູນ

# ການກໍານົດລາຄາຂາຍໃນຕະຫຼາດແຂ່ງຂັນບໍ່ສົມບູນ



## 2. ການກຳນົດລາຄາໃນທາງທິດສະດີໃນຕະຫຼາດຊື້

ຕະຫຼາດຊື້ສິນຄ້າເປັນການວິເຄາະໃນດ້ານຜູ້ຊື້ ເຊິ່ງອາດຊື້ສິນຄ້າມາຜະລິດຕໍ່ ສະນັ້ນສິນຄ້າທີ່ມາຊື້ຈຶ່ງເປັນສ່ວນໜຶ່ງຂອງການປັດໄຈການຜະລິດ

ໂຮງສີທີ່ຊື້ເຂົ້າເປືອກມາສີເປັນເຂົ້າສານ. ຊື້ໂຮງງານ້ຳຕານຮັບຊື້ອ້ອຍມາແປຮູບເປັນນ້ຳຕານ. ໂຮງງານຜະລິດອາຫານສັດຊື້ສາລີເພື່ອຜະລິດອາຫານສັດສຳເລັດຮູບ



ຖ້າພໍ່ຄ້າ ຫຼື ຜູ້ປະກອບການຕ້ອງການຮັບຊື້ສິນຄ້າຈາກຊາວກະສິກອນມາຜະລິດເປັນສິນຄ້າຕໍ່ ໂດຍມີວັດຖຸປະສົງເພື່ອໃຫ້ໄດ້ກຳໄລສູງສຸດຈະຕ້ອງຮັບຊື້ໃນປະລິມານທີ່ສ່ວນຕ່າງລະຫວ່າງລາຍຮັບທັງໝົດ ກັບຕົ້ນທຶນລວມທັງໝົດ ຫຼື ລາຍຮັບສ່ວນເພີ່ມຈາກການໃຊ້ປັດໄຈເພີ່ມຂຶ້ນໜຶ່ງໜ່ວຍ(Marginal Revenue Product: MRPL )ເທົ່າກັບຕົ້ນທຶນສ່ວນເພີ່ມຈາກການໃຊ້ປັດໄຈເພີ່ມມຂຶ້ນໜຶ່ງໜ່ວຍ (Marginal Cost of  Input: MCL ) ເຊິ່ງແຍກພິຈາລະນາລາຍລະອຽດດັ່ງນີ້:

- ຮັບຊື້ສິນຄ້າ(ປັດໄຈ) ແລະ ຂາຍຜົນຜະລິດໃນຕະຫຼາດແຂ່ງຂັນສົມບູນ

$$MRP_L = \frac{\Delta TR}{\Delta L} = MP_L \times MR$$

$\Delta TR$ : ສ່ວນປ່ຽນແປງຂອງລາຍຮັບລວມ

$\Delta L$ : ສ່ວນປ່ຽນແປງຂອງປັດໄຈ $L$

$MP_L$ : ປະລິມານຜົນຜະລິດສ່ວນເພີ່ມຂອງປັດໄຈ $L$

MR :ລາຍຮັບສ່ວນເພີ່ມຈາກການຜະລິດສິນຄ້າເພີ່ມຂຶ້ນໜຶ່ງໜ່ວຍ





$$MC_L = \frac{\Delta TC}{\Delta L} = MP_L \times MC$$

$\Delta TC$ : ສ່ວນປ່ຽນແປງຂອງຕົ້ນທຶນລວມ

MC :ຕົ້ນທຶນສ່ວນເພີ່ມຈາກການຜະລິດສິນຄ້າເພີ່ມຂຶ້ນໜຶ່ງໜ່ວຍ

ດັ່ງນັ້ນ ປະລິມານຊື້ສິນຄ້າ ຫຼື ປັດໄຈທີ່ເຮັດໃຫ້ໄດ້ຮັບກຳໄລສູງສຸດຈະເປັນປະລິມານ

$$MRP_L = MC_L$$

# ປະລິມານຂອງສິນຄ້າ (ປັດໃຈ) ແລະ ລາຄາໃນກໍລະນີຕະຫຼາດທີ່ມີການແຂ່ງຂັນສົມບູນ ທັງຮັບຊື້ປັດໃຈ ແລະ ການຜົນຜະລິດ



- ຮັບຊື້ສິນຄ້າ (ປັດໄຈ) ໃນຕະຫຼາດຜູກຂາດ ແລະ ຂາຍຜົນຜະລິດໃນຕະຫຼາດແຂ່ງຂັນທີ່ສົມບູນ

ເປັນກໍລະນີທີ່ມີພໍ່ຄ້າຜູກຂາດການຮັບຊື້ສິນຄ້າຈາກຊາວກະສິກອນ ຫຼື ປັດໄຈພຽງລາຍດຽວ ແລະ ຂາຍຜົນຜະລິດໃນຕະຫຼາດແຂ່ງຂັນສົມບູນ ການກໍານົດລາຄາຮັບຊື້ປັດໄຈ ແລະ ປະລິມານປັດໄຈທີ່ຊື້ເພື່ອໃຫ້ໄດ້ກໍາໄລສູງສຸດສະແດງໄດ້ດັ່ງຮູບ

# ການກຳນົດປະລິມານຊື້ສິນຄ້າ(ປັດໃຈ) ແລະ ລາຄາ ກໍລະນີຜູກຂາດ ໃນການຮັບຊື້ປັດໃຈ ແລະ ຂາຍຜົນຜະລິດໃນຕະຫຼາດແຂ່ງຂັນສົມບູນ



- ຜູ້ຮັບຊື້ສິນຄ້າ(ປັດໄຈ) ຜູກຂາດໃນການຮັບຊື້ ແລະ ຜູ້ຂາຍສິນຄ້າ(ປັດໄຈ) ຜູກຂາດໃນການຂາຍ

ກໍລະນີທີ່ມີພໍ່ຄ້າພຽງລາຍດຽວຮັບຊື້ສິນຄ້າຈາກຊາວກະສິກອນ ແລະ ຊາວກະສິກອນກໍ່ຂາຍຜົນຜະລິດຂອງຕົນຢ່າງຜູກຂາດດ້ວຍ ເຊິ່ງອາດຈະລວມກຸ່ມເປັນສະຫະກອນ ແລະ ຂາຍໃນນາມກຸ່ມ ການກໍານົດລາຄາ ແລະ ປະລິມານຮັບຊື້ຈະເປັນໄປດັ່ງນີ້:

- ການກຳນົດລາຄາ ແລະ ປະລິມານຮັບຊື້ສິນຄ້າ ກໍລະນີຜູກຂາດທັງຜູ້ຮັບ ແລະ ຜູ້ຂາຍ



# Home work

1. ຕະຫຼາດສິນຄ້າກະເສດລ່ວງໜ້າມີປະໂຫຍດໃນດ້ານໃດແດ່?

2. ຈົ່ງອະທິບາຍການກຳນົດລາຄາຊື້-ຂາຍໃນທາງທດສະດີມີແນວໃດ?

# Reference


Keodouangkham et al., (2022). Agriculture Economics. Souphanoupovong University.

Slidescarnival. (2022). *Free PowerPoint and Google Slides Templates for your Presentations* [Heredity Genetics Slides]. https://www.slidescarnival.com/template/heredity-genetics-slides/240159




## Contact:

Tel: +85620 28616221

Email address: phavone@su.edu.la

